# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 25 ທັນວາ 2022 (12-25-2022)

---

## ການຍອມຈຳນົນຕໍ່ພຣະເຈົ້າໃນບ່ອນຢ້ານກົວ

*ເມື່ອໃດທີ່ມີການປ່ຽນແປງທີ່ໜ້າພໍໃຈໄດ້ເກີດຂຶ້ນຢ່າງບໍ່ຄາດຝັນ?*

**ຈຸດສຳຄັນໃນບົດຮຽນ:** ພຣະປະສົງຂອງພຣະເຈົ້າທີ່ຈະກະທຳການຜ່ານພວກເຮົາບໍ່ແມ່ນເຫດຜົນທີ່ພາໃຫ້ຢ້ານກົວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃຫ້ພວກເຮົາກຳຈັດຄວາມຄິດຜິດພາດອັນນຶ່ງກ່ຽວກັບຄົນແກ່ເຕັມກະສຽນ: ເຂົາເຈົ້າບໍ່ມັກການປ່ຽນແປງ. ເຫດຜົນແມ່ນວ່າພວກເຂົາບໍ່ມັກການປ່ຽນແປງເພາະວ່າພວກເຂົາເຈົ້າມີອາຍຸແກ່ກວ່າແລະສະນັ້ນແລ້ວ, ຍຶດຕັ້ງໃນທາງຂອງເຂົາເຈົ້າເອງ. ແຕ່ວ່າຄວາມເປັນຈິງກໍຄືວ່າ: ບໍ່ມີໃຜໃນພວກເຮົາມັກການປ່ຽນແປງ- ແລະພວກເຮົາທັງໝົດໄດ້ຍຶດໝັ້ນໃນທາງຂອງພວກເຮົາເອງ! ພວກເຮົາລຶ້ງເຄີຍກັບການເຮັດແບບປົກກະຕິ ຫຼືເຮັດສິ່ງຕ່າງໆໃນທາງສະເພາະຂອງມັນ, ແລະພວກເຮົາເຫັນວ່າບໍ່ມີເຫດຜົນໃນການປ່ຽນແປງ.

ແນ່ນອນ, ພວກເຮົາປ່ຽນແປງຢ່າງເຕັມໃຈໃນບາງຢ່າງຂອງພວກເຮົາເຊັ່ນວ່າການຊື້ຣົດຄັນໃໝ່ຫຼືການປ່ຽນວຽກໃໝ່. ພວກເຮົາໂອບກອດການປ່ຽນແປງທີ່ຈະມາເຖິງໂດຍໄດ້ກາຍເປັນພໍ່ແມ່ຫຼືພໍ່ເຖົ້າແມ່ເຖົ້າ. ແຕ່ວ່າເມື່ອການປ່ຽນແປງເປັນແຮງພັກດັນໃຫ້ພວກເຮົາໂດຍຄົນອື່ນໆ, ພວກເຮົາສາມາດຕ້ານທານໄດ້. ຈະເປັນຢ່າງມດຖ້າວ່າສິ່ງນັ້ນບໍ່ດີກວ່າ? ຈະເປັນຢ່າງໃດຖ້າສິ່ງນີ້ມັນຍາກກວ່າ? ຈະເປັນຢ່າງໃດຖ້າວ່າ...? ພວກເຮົາສາມາດຍົກຄວາມກັງວົນຫຼາຍໆຢ່າງແລະທີ່ອາດຈະເປັນຄວາມຢ້ານກົວຂຶ້ນຢ່າງວ່ອງໄວ.

ເຖິງແມ່ນວ່າເມື່ອພວກເຮົາຮູ້ວ່າພຣະເຈົ້າຢູ່ເບື້ອງຫຼັງການປ່ຽນແປງ, ຄວາມຢ້ານກົວສາມາດຍັງມີຢູ່. ໃນລູກາ 1, ພວກເຮົາເຫັນຍິງໜຸ່ມຜູ້ທີ່ກຳລັງຈະມີປະສົບການການປ່ຽນແປງທີ່ບໍ່ໜ້າເຊື່ອໃນຊີວິດແລະສະຖານະການຕ່າງໆຂອງນາງ. ພວກເຮົາສາມາດຮັບຄຳໜູນໃຈໂດຍນາງເປັນຕົວຢ່າງໃນການໄວ້ວາງໃຈພຣະເຈົ້າບໍ່ວ່າມີຫຍັງເກີດຂຶ້ນ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ລູກາ 1:26-29</u>

*26. ເມື່ອເຖິງເດືອນຖ້ວນຫົກເທວະດາຄັບຣີເອນໄດ້ຮັບໃຊ້ຈາກພຣະເຈົ້າ ມາຍັງເມືອງນຶ່ງໃນແຂວງຄາລີເລຊື່ນາຊາເຣັດ. 27. ມາຫາຍິງພົມຈາຣີຄົນນຶ່ງ ຊຶ່ງເປັນຄູ່ໝັ້ນຂອງຊາຍຄົນນຶ່ງຊື່ໂຢເຊບ ຜູ້ເປັນເຊື້ອສາຍຂອງກະສັດດາວິດ ນາງນັ້ນຊື່ມາຣີອາ. 28. ເມື່ອເທວະດາມາເຖິງນາງແລ້ວຈຶ່ງເວົ້າວ່າ, "ຈົ່ງຈະເຣີນເທີນ, ເຈົ້າຜູ້ທີ່ຊົງໂຜດພຣະກະຣຸນາປານີຫຼາຍ ອົງພຣະຜູ້ເປັນເຈົ້າກໍຊົງສະຖິດຢູ່ກັບເຈົ້າ." 29. ຝ່າຍມາຣີອາກໍຕົກສະທ້ານໃຈເພາະຖ້ອຍຄຳຂອງເທວະດານັ້ນ ຈຶ່ງຮ່ຳເພິງວ່າຄຳທັກທາຍນີ້ຈະໝາຍຄວາມວ່າຢ່າງໃດ?*

ທູດສວັນ ຄັບຣີເອນມີບົດບາດສຳຄັນໃນເຫດການທີ່ບັນທຶກໄວ້ໃນລູກາ 1. ທ່ານໄດ້ມາປາກົດຕົວເທື່ອນຶ່ງແລ້ວຕໍ່ຊາຂາຣີຢາເພື່ອແຈ້ງໃຫ້ລາວຮູ້ວ່າຄຳອະທິຖານຂອງລາວພຣະເຈົ້າໄດ້ຍິນແລ້ວ. ເຖິງແມ່ນວ່າພວກເຂົາເຈົ້າໄດ້ "ຜູກພັນກັນດີໃນຫຼາຍປີ," ຊາຂາຣີຢາແລະພັນລະຍາຂອງລາວໄດ້ຖືກບອກວ່າເຂົາເຈົ້າຈະມີລູກຊາຍຜູ້ທີ່ຈະກະກຽມທາງສຳລັບພຣະເມຊີອາ. ດຽວນີ້ໃນຂໍ້ 26, ຄັບຣີເອນປະກາດເຖິງວ່າເປັນການເກີດຂອງພຣະເມຊີອາ.

ມາຣີອາເປັນຍິງໜຸ່ມ; ນັກວິຊາການເຊື່ອວ່ານາງອາດຈະເປັນວັຍລຸ້ນ. ນາງແມ່ນ "ຄູ່ໝັ້ນກັບຊາຍຄົນນຶ່ງທີ່ຊື່ວ່າ ໂຢເຊບ" ແລະ

ລູກາຊີ້ບອກອີກສອງເທື່ອວ່ານາງເປັນຍິງພົມມະຈາຣີ. ຄຳເວົ້າໃນພາສາ ກຣີກ ສຳລັບພົມມະຈາຣີກໍມີຄວາມໝາຍແນວດຽວກັນກັບຄວາມໝາຍໃນພາສາອັງກິດ. ນາງບໍ່ໄດ້ມີເພດສຳພັນກັບຜູ້ຊາຍ.

ໂດຍປົກກະຕິແລ້ວ, ເມື່ອທູດສວັນປາກົດຢູ່ໃນພຣະຄັມພີ, ການໂຕ້ຕອບກໍຄືຄວາມຢ້ານກົວ. ເບິ່ງຄືວ່າພໍສາມາດເຂົ້າໃຈໄດ້; ຂ້າພະເຈົ້າແນ່ໃຈວ່າຮູບລັກສະນະຂອງເທວະດາ-ຜູ້ສົ່ງຂ່າວບໍຣິສຸດແລະນັກຮົບແຫ່ງຟ້າສວັນຈາກພຣະເຈົ້າ-ອາດຈະເຮັດໃຫ້ມີການຢ້ານ. ມາຣີອາຈະຄຸ້ນເຄີຍກັບປວັດສາດທີ່ບັນທຶກໄວ້ໃນພຣະຄັມພີພາສາເຮັບເຣີ, ເວລາທີ່ຜູ້ສົ່ງຂ່າວຂອງພຣະເຈົ້າສົ່ງຂໍ້ຄວາມນຶ່ງໃນສອງປະເພດ. ທຳອິດ, ບາງຂໍ້ຄວາມແມ່ນຄຳເຕືອນຫຼືການປະກາດການພິພາກສາທີ່ຈະມາເຖິງ. ອັນທີສອງ, ບາງຂໍ້ຄວາມແມ່ນການເຊື້ອເຊີນຫຼືການປະກາດທີ່ບຸກຄົນນັ້ນຈະມີສ່ວນຮ່ວມໃນວຽກງານຂອງພຣະເຈົ້າ. ວຽກງານນີ້ອາດຈະມີຄວາມຫຍຸ້ງຍາກ, ແຕ່ມັນຈະເຮັດໃຫ້ບາງສິ່ງບາງຢ່າງພິເສດ.

ເມື່ອໃດທີ່ທ່ານຮູ້ສຶກມີບັນຫາຈາກສິ່ງທີ່ທ່ານບໍ່ຮູ້ຈັກ?

ມາຣີອາມີບັນຫາ, ແຕ່ບໍ່ແມ່ນຍ້ອນທູດສວັນໄດ້ປາກົດຕົວຕໍ່ນາງ. ນາງມີບັນຫາໂດຍຄວາມໝາຍຂອງຄຳເວົ້າຂອງທູດສວັນ. ຄຳປະກາດຂອງຄັບຣິເອນຕໍ່ນາງມາຣີອາບໍ່ແມ່ນຄຳເວົ້າຕັດສິນ; ແທນທີ່ຈະ, ມັນແມ່ນຂ້ອນຂ້າງກົງກັນຂ້າມ. ມັນເປັນການທັກທາຍທີ່ເວົ້າເຖິງພຣະຄຸນຂອງພຣະເຈົ້າ ແລະຄວາມໂປດປານ: “ຈົ່ງຈະເຣີນເທີ້ນ, ເຈົ້າຜູ້ທີ່ຊົງໂຜດພຣະກະຣຸນາປານີຫຼາຍ! ອົງພຣະຜູ້ເປັນເຈົ້າກໍຊົງສະຖິດຢູ່ກັບເຈົ້າ.” (v. 28) ຂໍ້ຄວາມນີ້ໝາຍຄວາມວ່າແນວໃດກັບນາງ, ຜູ້ເປັນຍິງໜຸ່ມຊາວຢິວທັມມະດາຜູ້ນຶ່ງ? ພຣະເຈົ້າໄດ້ໃຫ້ກຽດພິເສດແກ່ນາງມາຣີອາ. ເປັນຫຍັງອີກພຣະອົງຈຶ່ງໄດ້ສົ່ງທູດສວັນມາບອກນາງວ່າພຣະເຈົ້າໄດ້ຊົງສະຖິດຢູ່ກັບນາງ? ສຳລັບຫຼາຍຄົນໃນພວກເຮົາ, ການຮູ້ວ່າພຣະເຈົ້າຊົງຢູ່ດ້ວຍກໍສາມາດເປັນກຳລັງໃຈໄດ້; ຂະນະທີ່ຄົນອື່ນອີກ, ການຊົງສະຖິດຂອງພຣະເຈົ້າອາດຈະສົມເຫດສົມຜົນທີ່ເຮັດໃຫ້ເຂົາເຈົ້າສັ່ນສະທ້ານຢ້ານກົວ. ແຕ່ສຳລັບມາຣີອາແລ້ວ, ໄດ້ມີບັນຫາເພາະວ່ານາງບໍ່ໄດ້ຮູ້ວ່າເປັນຫຍັງນາງຈຶ່ງໄດ້ຮັບຄວາມໂປດປານຫຼືໄດ້ຮັບພອນຈາກບ່ອນຊົງປະທັບຢູ່ຂອງພຣະເຈົ້າ.

## 2. ລູກາ 1:30-33

*30. ແລ້ວເທວະດາໄດ້ກ່າວກັບນາງວ່າ, “ມາຣີອາເອີຍ, ຢ່າຊູ່ຢ້ານ ເພາະວ່າເຈົ້າເປັນທີ່ຊົງພຣະກະຣຸນາໂຜດແລ້ວ. 31. ເບິ່ງແມ່, ເຈົ້າຈະມີທ້ອງແລະປະສູດບຸດຊາຍ ຈົ່ງຕັ້ງຊື່ບຸດນັ້ນວ່າ ເຢຊູ. 32. ບຸດນັ້ນຈະໄດ້ເປັນໃຫຍ່ ແລະຈະຊົງເອີ້ນວ່າພຣະບຸດຂອງຜູ້ສູງສຸດ ອົງພຣະຜູ້ເປັນເຈົ້າຊົງປະທານພຣະທີ່ນັ່ງຂອງກະສັດດາວິດ ຜູ້ເປັນບັນພະບຸຣຸດຂອງທ່ານ ໃຫ້ແກ່ທ່ານ. 33. ແລະທ່ານຈະສເວີຍຣາຊຄຸ້ມຄອງເຊື້ອສາຍຂອງຢາໂຄບສືບໆໄປເປັນນິດແລະຣາຊອານາຈັກຂອງທ່ານຈະບໍ່ຮູ້ສິ້ນສຸດ.”*

ເມື່ອຄັບຣິເອນ, ຜູ້ສົ່ງຂ່າວຈາກພຣະເຈົ້າ, ເວົ້າວ່າ, "ຢ່າຢ້ານ," ມັນດີທີ່ສຸດທີ່ຈະຈື່ໄວ້ວ່າໃຜເປັນຜູ້ເວົ້າແລະຜູ້ທີ່ລາວເປັນຕົວແທນນັ້ນ. ພາຍໃນເຣື່ອງຂອງວັນຄຣິສມາດ, ການບອກບໍ່ໃຫ້ຢ້ານໄດ້ຍິນຫຼາຍຄັ້ງແລ້ວ. ເຊກາຣີຢາກໍໄດ້ຍິນ (ລູກາ 1:13); ໂຢເຊບກໍໄດ້ຍິນໃນ (ມັດທາຍ 1:20); ແລະພວກລ້ຽງແກະກໍໄດ້ຍິນ (ລູກາ 2:10). ມາຣີອາບໍ່ຈຳເປັນຕ້ອງຢ້ານເພາະວ່ານາງໄດ້ມີ "ຄວາມໂປດປານຈາກພຣະເຈົ້າ" (v. 30). ຮວມທັງພວກທີ່ມີສ່ວນຮ່ວມໃນເຣື່ອງລາວຂອງຄຣິສມາດຈຳເປັນຕ້ອງໄດ້ຍິນມັນ, ພວກເຮົາທຸກຄົນຈຳເປັນຕ້ອງໄດ້ຍິນມັນ. ໃນທັງໝົດສະຖານະການທີ່ແຕກຕ່າງກັນຂອງຊີວິດ, ພວກເຮົາບໍ່ຕ້ອງຢ້ານເພາະວ່າເຮົາຮູ້ວ່າແມ່ນຜູ້ໃດໄປກັບເຮົາ.

ເຫດຜົນທີ່ນາງມາຣີບໍ່ຈຳເປັນຕ້ອງຢ້ານເພາະນາງໄດ້ “ເປັນທີ່ຊົງພຣະກະຣຸນາໂຜດແລ້ວ.” ເປັນທີ່ຊົງພຣະກະຣຸນາໂຜດແລ້ວກັບພຣະເຈົ້າໝາຍເຖິງການ “ເຕັມໄປດ້ວຍພຣະຄຸນ.” ປໂຍກນີ້ສະແດງເຖິງນາງມາຣີອາຢ່າງຈະແຈ້ງໃນຖານະເປັນຜູ້ຮັບພຣະຄຸນຂອງພຣະເຈົ້າ. ບາງຄົນເຮັດຢ່າງບໍ່ຖືກຕ້ອງວ່ານາງມາຣີອາເປັນຜູ້ແຈກຈ່າຍພຣະຄຸນ, ເຖິງແມ່ນວ່າຕົວນາງເອງກໍຈຳເປັນຕ້ອງການພຣະຄຸນດ້ວຍ. ແລະຂອບຄຸນພຣະເຈົ້າ, ດຽວນີ້ສາມາດເວົ້າໄດ້ວ່າທຸກຄົນທີ່ຍອມຮັບພຣະເຈົ້າໂດຍຄວາມເຊື່ອແລະກໍໄດ້ກາຍເປັນບຸດຂອງພຣະອົງ ແລ້ວພວກເຮົາກໍເຕັມໄປດ້ວຍພຣະຄຸນ.

ມັນມີຄ່າທີ່ເນັ້ນໜັກອີກເທື່ອນຶ່ງທີ່ພວກເຮົາອາດຈະບໍ່ເຂົ້າໃຈທຸກສິ່ງທຸກຢ່າງທີ່ພຣະເຈົ້າໄດ້ວາງແຜນໄວ້ສຳລັບຊີວິດຂອງພວກເຮົາ, ແຕ່ພວກເຮົາສາມາດໄວ້ວາງໃຈພຣະອົງໄດ້ເພາະການຊົງສະຖິດຢູ່ດ້ວຍແລະພຣະຄຸນຂອງພຣະອົງ. ຄວາມເມດຕາໃນການສະຖິດຢູ່ນຳຂອງພຣະອົງຄວນກຳຈັດຄວາມຢ້ານກົວຕ່າງໆອອກໄປ. ດັ່ງທີ່ດາວິດໄດ້ປະກາດວ່າ, "ເມື່ອຂ້ານ້ອຍຢ້ານ ຂ້ານ້ອຍຈະໄວ້ວາງໃຈໃນພຣະອົງ." (ເພງສັຣເສີນ 56:3) ຄວາມຢ້ານກົວຢາກໃຫ້ພວກເຮົາອ່ອນເພັຽແລະມີຄຳສຸດທ້າຍບັງຄັບໃນຊີວິດເຮົາ, ແຕ່ການຊົງສະຖິດຢູ່ນຳຂອງພຣະເຈົ້າຊະນະຄວາມຢ້ານທຸກໆຄັ້ງ.

ຖ້ອຍຄຳຕໍ່ໄປຂອງຄັບຣີເອນໄດ້ເຮັດໃຫ້ມັນຊັດເຈນວ່ານາງມາຣີອາໄດ້ຮັບຄວາມໂປດປານແນວໃດຈາກພຣະເຈົ້າ. ນາງຈະໃຫ້ກຳເນີດ "ພຣະບຸດຂອງອົງສູງສຸດ." ມາຣີອາຄົງຈະບໍ່ພາດຕໍ່ຄຳກ່າວທີ່ຊົງພະລັງຍິ່ງໃຫຍ່ເຫຼົ່ານັ້ນທີ່ນາງໄດ້ຍິນ. ຄຳກ່າວນີ້ໝາຍເຖິງອຳນາດ, ຄວາມເຂັ້ມແຂງ, ແລະສິດອຳນາດຂອງພຣະເຈົ້າ. ມັນໝາຍຄວາມວ່າພຣະບິດາແມ່ນເໜືອກວ່າທຸກຄົນແລະທຸກສິ່ງທຸກຢ່າງໃນທຸກທາງ. ລະຍະນີ້ຍັງສະແດງໃຫ້ພວກເຮົາເຫັນວ່າການເປັນບຸດອົງສູງສົ່ງຂອງພຣະເຢຊູແມ່ນການເຊື່ອມຕໍ່ກັບການເປັນພຣະເມຊີອາຂອງພຣະອົງ; ດັ່ງນັ້ນ, ພຣະອົງມີຄວາມສເມີພາບກັບພຣະເຈົ້າ (ຟີລິບປອຍ 2:6). ປໂຍກນີ້ຍັງເຕືອນພວກເຮົາວ່າພຣະເຢຊູມີລັກສະນະດຽວກັນກັບພຣະເຈົ້າພຣະບິດາ.

ລູກຂອງນາງມາຣີອາຈະເປັນເຈົ້າຊີວິດ. "ພຣະຜູ້ເປັນເຈົ້າອົງຊົງເປັນພຣະເຈົ້າຈະປະທານບັນລັງຂອງດາວິດບິດາຂອງເພິ່ນ. ພຣະອົງຈະປົກຄອງເຮືອນຂອງຢາໂຄບຕລອດໄປ, ແລະອານາຈັກຂອງພຣະອົງຈະບໍ່ມີບ່ອນສິ້ນສຸດ" (v. 32b-33). ຣາຊອານາຈັກຂອງພຣະເຢຊູເປັນອັນສູງສົ່ງ ແລະຈະຢູ່ຕລອດຊົ່ວນິລັນດອນ. ຄຳສັນຍາຕ່າງໆອາດຈະເຕືອນນາງມາຣີອາເຖິງຄຳສັນຍາຂອງພຣະເຈົ້າຕໍ່ດາວິດ: "ເຮືອນແລະອານາຈັກຂອງເຈົ້າຈະຢູ່ຕໍ່ໜ້າເຮົາຕລອດໄປ ແລະບັນລັງຂອງເຈົ້າຈະຖືກຕັ້ງໄວ້ຕລອດໄປ" (2 ຊມອ 7:16).

ທົ່ວທັງພຣະຄັມພີພວກເຮົາພົບກັບບຸກຄົນທີ່ໄດ້ໃຫ້ໂອກາດຕ່າງໆເພື່ອກ້າວເຂົ້າສູ່ສິ່ງທີ່ບໍ່ຮູ້ຈັກແລະໄວ້ວາງໃຈພຣະເຈົ້າໃນການເດີນທາງ. ດຽວນີ້ມາຣີອາໄດ້ກຳລັງກ້າວເຂົ້າສູ່ສະຖານະການທີ່ບໍ່ເຄີຍມີຜູ້ຍິງກ່ອນຫຼືນັບຕັ້ງແຕ່ໄດ້ມີປະສົບການ ແລະນາງຈະຈຳເປັນຕ້ອງໄວ້ວາງໃຈພຣະເຈົ້າ. ບໍ່ຈຳເປັນຕ້ອງຢ້ານເພາະພຣະເຈົ້າຈະໃຊ້ການເຊື່ອຟັງຂອງນາງເພື່ອເຮັດບາງສິ່ງບາງຢ່າງທີ່ບໍ່ເຄີຍໄດ້ມີມາກ່ອນແລະຈະນຳພຣະຄຸນແລະຄວາມລອດພົ້ນມາໃຫ້ທຸກຄົນ.

ເປັນຫຍັງບາງຄັ້ງເຮົາຈຶ່ງຢ້ານແຜນຂອງພະເຈົ້າ?

### 3. ລູກາ 1:34-38

*34. ຝ່າຍມາຣີອາຈຶ່ງທູນເທວະດານັ້ນວ່າ, "ເຫດການນີ້ຈະເປັນໄປໄດ້ຢ່າງໃດ ເພາະຂ້ານ້ອຍຍັງບໍ່ທັນໄດ້ຮ່ວມຮູ້ກັບຊາຍຈັກເທື່ອ." 35. ເທວະດາໄດ້ຕອບນາງວ່າ, "ພຣະວິນຍານບໍຣິສຸດຈະສະເດັດລົງມາເຖິງເຈົ້າ ແລະຣິດເດດຂອງຜູ້ສູງສຸດຈະປົກຄຸມເຈົ້າໄວ້ ເຫດສັນນີ້ບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າບໍຣິສຸດ ຄືພຣະບຸດຂອງພຣະເຈົ້າ. 36. ເບິ່ງແມ່, ເຖິງນາງເອລີຊາເບັດພີ່ນ້ອງຂອງເຈົ້າຜູ້ແກ່ຊະຣາແລ້ວ ກໍຍັງມີທ້ອງຈະເກີດບຸດຊາຍເໝືອນກັນ ບັດນີ້ນາງທີ່ເຂົາຖືວ່າເປັນຍິງໝັນກໍມີທ້ອງໄດ້ຫົກເດືອນແລ້ວ. 37. ເພາະວ່າຝ່າຍພຣະເຈົ້າບໍ່ມີສິ່ງໃດທີ່ເຫຼືອພຣະກຳລັງ." 38. ສ່ວນມາຣີອາກໍທູນວ່າ, "ຂ້ານ້ອຍນີ້ແຫຼະ, ເປັນຂ້ອຍຍິງຂອງອົງພຣະຜູ້ເປັນເຈົ້າ ຂໍໃຫ້ບັງເກີດແກ່ຂ້ານ້ອຍຕາມຄຳຂອງທ່ານເທີ້ນ" ແລ້ວເທວະດາຕົນນັ້ນໄດ້ຈາກນາງໄປ.*

ມັນບໍ່ແມ່ນວ່າມາຣີອາສົງສັຍຄຳປະກາດຂອງຄັບຣີເອນ, ແຕ່ນາງມີຄຳຖາມ, ຄວາມສັບສົນຂອງນາງມາຣີອາເກີດຂຶ້ນຍ້ອນນາງຄິດວ່າທູດສວັນກຳລັງອະທິບາຍເຖິງແນວຄິດປົກກະຕິຈາກການກະທຳທີ່ນາງກັບໂຢເຊບໄດ້ເປັນຄູ່ໝັ້ນນັບຕັ້ງແຕ່ນາງຮູ້ວ່ານາງແລະໂຈເຊັບບໍ່ມີການແຕ່ງງານທີ່ສຳເລັດສົມບູນຂອງເຂົາເຈົ້າ, ນາງໄດ້ຮ້ອງຂໍໃຫ້ມີຄວາມກະຈ່າງແຈ້ງ: "ມັນເປັນໄປໄດ້ແນວໃດ, ເພາະວ່າຂ້ານ້ອຍບໍ່ມີມີເພດສຳພັນກັບຜູ້ຊາຍ?" (ຂໍ້ 34),

ຄຳຕອບຂອງທູດສວັນຕໍ່ກັບຄຳຖາມຂອງມາຣີອາໄດ້ບັນລະຍາຍເຖິງວຽກງານສ້າງສັນຂອງພຣະວິນຍານບໍຣິສຸດ: "ພຣະວິນຍານບໍຣິສຸດ

ຈະສະເດັດມາເຖິງເຈົ້າ, ແລະອຳນາດຂອງອົງສູງສຸດຈະປົກຄຸມເຈົ້າ" (v. 35). ປົກຄຸມໝາຍເຖິງໃນແງ່ຂອງຄວາມບໍລິສຸດ, ມີອຳນາດຂອງການຊົງສະຖິດຢູ່ດ້ວຍຂອງພຣະເຈົ້າ. ຄວາມຍິ່ງໃຫຍ່ຂອງພຣະເຈົ້າແມ່ນມີພຽງພໍເພື່ອສນັບສນູນນາງມາຣີແລະນຳມາເຖິງການເກີດບໍຣິສຸດ. ຢ່າງໜ້າສ້າງສັນ, ພຣະວິນຍານບໍຣິສຸດໄດ້ນຳເອົາການຕັ້ງທ້ອງຝ່າຍຮ່າງກາຍຂອງພຣະເຢຊູ. ດັ່ງທີ່ຄັບຣິເອນໄດ້ເປັນພະຍານວ່າ: "ດ້ວຍວ່າຈະບໍ່ມີຫຍັງຈະເປັນໄປບໍ່ໄດ້ສຳລັບພຣະເຈົ້າ" (v. 37).

ຄຳຕອບຂອງມາຣີອາຕໍ່ຄັບຣິເອນແມ່ນນຶ່ງໃນຄຳຕອບຂອງຂ້າພະເຈົ້າທີ່ມັກໃນຄຳບັນລະຍາຍໃນພຣະຄັມພີທັງໝົດ: "ເບິ່ງເຖີດ, ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ...ຂໍໃຫ້ມັນເກີດຂຶ້ນກັບຂ້ານ້ອຍຕາມທີ່ທ່ານເວົ້າ" (ຂໍ້ 37) ຂ້າພະເຈົ້າຮັກການຕອບສນອງຂອງນາງເພາະວ່າຂ້າພະເຈົ້າໄຝ່ຝັນທີ່ຈະໄວ້ວາງໃຈພຣະຜູ້ເປັນເຈົ້າແບບນີ້. ຄຳເວົ້ານັ້ນບາດໃຈຂ້າພະເຈົ້າເພາະວ່າມັນເຕືອນຂ້າພະເຈົ້າເຖິງຕອນທີ່ຂ້າພະເຈົ້າຍັງບໍ່ໄດ້ເປັນຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າເທື່ອ. ມັນເປີດເຜີຍໃຫ້ຂ້າພະເຈົ້າຮູ້ວ່າຂ້າພະເຈົ້າມັກປ່ອຍໃຫ້ຕົວເອງຫຼືຄວາມຢ້ານກົວນັ່ງຢູ່ເທິງບັນລັງຂອງຊີວິດຂ້າພະເຈົ້າ, ແຕ່ບໍ່ແມ່ນພຣະເຢຊູ.

ດ້ວຍຄວາມໝັ້ນໃຈ, ນາງມາຣີອາໄດ້ກ້າວເດີນໄປດ້ວຍຄວາມເຊື່ອແລະບໍ່ໄດ້ປ່ອຍໃຫ້ຄວາມຢ້ານກົວນັ່ງເທິງບັນລັງຂອງຊີວິດນາງ. ຊີວິດຂອງເຮົາຈະເປັນແນວໃດຖ້າເຮົາເຮັດຄືກັນກັບມາຣີອາ? ພວກເຮົາຈະນຳຕາມທາງໃນໂລກນີ້ທີ່ແຕກຕ່າງກັນນີ້ແນວໃດ? ຂໍໃຫ້ເຮົາມີຊີວິດຢູ່ໃນແບບທີ່ວ່າສິ່ງໃດກໍຕາມທີ່ຈະມາທາງຂອງພວກເຮົາແລະອັນໃດກໍຕາມເປັນການເຊື້ອເຊີນຂອງພຣະຜູ້ເປັນເຈົ້າແກ່ພວກເຮົາ, ພວກເຮົາກໍຕອບສນອງຄືກັນກັບມາຣີອາວ່າ: "ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ."

ເມື່ອໃດທີ່ທ່ານໄດ້ຮັບການເຕືອນວ່າພຣະເຈົ້າເປັນພຣະເຈົ້າແຫ່ງການເປັນໄປບໍ່ໄດ້?

## ນຳໃຊ້ໃນຊີວິດ

ພຣະປະສົງຂອງພຣະເຈົ້າທີ່ຈະເຮັດວຽກໂດຍຜ່ານພວກເຮົາບໍ່ແມ່ນເຫດຜົນທີ່ພາໃຫ້ຢ້ານກົວ. ທ່ານຈະສະແດງຄວາມໄວ້ວາງໃຈແລະຍອມຈຳນົນຕໍ່ພຣະອົງຢ່າງໃດ? ເລືອກນຶ່ງໃນການນຳໃຊ້ຕໍ່ໄປນີ້:

**ອ່ານ.** ອ່ານຜ່ານປຶ້ມພຣະຄັມພີເດີມເຊັ່ນອົບພະຍົບ. ໃຫ້ສັງເກດເວລາເມື່ອພຣະເຈົ້າໄດ້ປາກົດເຖິງແມ່ນວ່າຜ່ານສະຖານະການທີ່ເປັນໄປບໍ່ໄດ້ຕໍ່ພວກເຫຼົ່ານັ້ນທີ່ຢູ່ໃນເຣື່ອງລາວພຣະຄັມພີທີ່ພວກເຂົາກຳລັງໄດ້ປະເຊີນໜ້າ. ໃຫ້ສິ່ງນີ້ເປັນການເຕືອນວ່າເປັນຫຍັງທ່ານຈຶ່ງສາມາດໄວ້ວາງໃຈໃນພຣະເຈົ້າໄດ້ບໍ່ວ່າຢູ່ໃນສະຖານະການໃດກໍຕາມ.

**ເຊື່ອຟັງ.** ຖ້າເຈົ້າຮູ້ສຶກວ່າເຈົ້າກຳລັງປະເຊີນກັບສະຖານະການທີ່ເປັນໄປບໍ່ໄດ້, ບາງທີອາດມີຂັ້ນຕອນຂອງການເຊື່ອຟັງທີ່ທ່ານຕ້ອງເຮັດຂັ້ນຕອນທຳອິດຂອງທ່ານ. ນັ່ງສະມາທິໃນຂໍ້ພຣະຄັມພີ: "ສຳລັບພຣະເຈົ້າບໍ່ມີຫຍັງຈະເປັນໄປບໍ່ໄດ້" (ລູກາ 1:37) ຈົ່ງກ້າວອອກສູ່ຄວາມໄວ້ວາງໃຈດັ່ງທີ່ພຣະເຈົ້າມອບອຳນາດໃຫ້ທ່ານເຊື່ອຟັງພຣະອົງ, ບໍ່ວ່າສະຖານະການຕ່າງໆຂອງທ່ານຈະເປັນແນວໃດກໍຕາມ.

**ຮັບໃຊ້.** ພາຍໃນໂບດຂອງທ່ານຍັງມີບ່ອນທີ່ກຳລັງຊອກຫາຄົນອື່ນໃຫ້ມີສ່ວນຮ່ວມ. ບາງທີທ່ານຮູ້ສຶກວ່າບໍ່ໄດ້ກະກຽມຫຼືວ່າອະດີດຂອງທ່ານໄດ້ຕັດສິດທ່ານ. ຕິດຕໍ່ຜູ້ນຳຜູ້ໃດຜູ້ນຶ່ງແລະໃຫ້ເຂົາຮັບຮູ້ວ່າທ່ານ "ພ້ອມ" ທີ່ຈະຮັບແລະຮ່ວມມື.

ພວກເຮົາທຸກຄົນມີລະດັບຄວາມກັງວົນໃຈເມື່ອເຖິງເວລາມີການປ່ຽນແປງ. ແຕ່ວ່າໃນເວລາທີ່ພຣະເຈົ້າຜູ້ຊົງເປັນຜູ້ນຳພາພວກເຮົາເຂົ້າສູ່ການປ່ຽນແປງນັ້ນ, ພວກເຮົາສາມາດໝັ້ນໃຈແນ່ນອນໄດ້ວ່າບໍ່ມີຫຍັງທີ່ຈະຢ້ານກົວເລີຍ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**